ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ເຜີຍແຜ່ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດ ການພັດທະນາການຄຸ້ມຄອງຕາມມາດຕະຖານບາເຊວ

ຄະນະເຮັດວຽກພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ, ກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບ ທຫລ ສາຂາພາກເໜືອ ແຂວງຫຼວງພະບາງ ແລະ ທຫລ ສາຂາພາກໃຕ້ ແຂວງຈຳປາສັກ ໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງຕາມມາດຕະຖານບາເຊວ ແຕ່ປີ 2017 – 2025 ແລະ ຄວາມຄືບໜ້າໃນການພັດທະນາຄູ່ມືການຄຸ້ມຄອງຕາມຄວາມສ່ຽງເຊິ່ງ ຄັ້ງທີ 1 ໄດ້ຈັດຂຶ້ນທີ່ແຂວງຫຼວງພະບາງໃນວັນທີ 26 ກຸມພາ 2018, ພາຍໃຕ້ການເປັນປະທານໂດຍ ທ່ານ ອາລຸນ ບຸນຍົງ ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຫຼວງພະບາງ ແລະ ຄັ້ງທີ 2 ທີ່ແຂວງຈຳປາສັກ ໃນວັນທີ 2 ມີນາ 2018, ພາຍໃຕ້ການເປັນປະທານຂອງ ທ່ານ ວຽງສະຫວັນ ໄຊຍະວົງ ຮັກສາການຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ, ເຊິ່ງແຕ່ລະແຫ່ງມີການເຂົ້າຮ່ວມຂອງຄະນະກົມ, ຄະນະສາຂາ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງ.

ກອງປະຊຸມດັ່ງກ່າວ ໄດ້ນຳສະເໜີກ່ຽວກັບການຈັດຕັ້ງປະຕິບັດວຽກງານບາເຊວ 2 ໃນໄລຍະຜ່ານມາແລະ ທິດທາງແຜນການຈັດຕັ້ງປະຕິບັດບາເຊວ 2 ກໍຄືວຽກງານການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ໂດຍສະເພາະໄດ້ຍົກລະດັບການຄຸ້ມຄອງທະນາຄານທຸລະກິດຂອງ ສປປ ລາວ ເຊິ່ງ ທຫລ ໄດ້ນຳມາຄົ້ນຄ້ວາ ເພື່ອສ້າງເປັນແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ແຕ່ປີ 2017 ຫາ ປີ 2025 ສຳເລັດ ແລະ ເຊັນຮັບຮອງຈາກທ່ານຜູ້ວ່າການໃນທ້າຍປີ 2017 ; ການເຜີຍແຜ່ຄັ້ງນີ້ ແນໃສ່ພະນັກງານທຸກຂັ້ນຂອງ ທຫລ ສາມາດເຂົ້າໃຈ ແລະ ກຳໄດ້ວຽກງານດັ່ງກ່າວ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍໃຫ້ມີປະສິດທິຜົນ ແລະ ວຽກງານນີ້ໄດ້ຕິດພັນເຖິງຄວາມຮັບຜິດຊອບຂອງຫຼາຍພາກສ່ວນ ແລະ ຫຼາຍກົມ.

ທ່ານຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ຫົວໜ້າຄະນະເຮັດວຽກພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ພ້ອມດ້ວຍຄະນະກໍ່ໄດ້ນຳສະເໜີບາງເນື້ອໃນສຳຄັນຂອງແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງຕາມມາດຕະຖານບາເຊວຊຶ່ງປະກອບມີ: ຄວາມຈຳເປັນໃນການສ້າງແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດມາດຕະຖານບາເຊວ; ເນື້ອໃນສຳຄັນຂອງຫຼັກການບາເຊວ 2 ແລະ ເນື້ອໃນໂດຍລວມຂອງແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດ. ນອກຈາກນັ້ນ, ກໍ່ຍັງໄດ້ນຳສະເໜີການພັດທະນາການຄຸ້ມຄອງຕາມຄວາມສ່ຽງ ຊຶ່ງໄດ້ສະແດງໃຫ້ເຫັນບັນດາຂະບວນການວິເຄາະຖານະການເງິນ ແລະ ກວດກາທະນາຄານທຸລະກິດ ລວມທັງຜະລິດຕະພັນທີ່ຜູ້ຄຸ້ມຄອງນຳໃຊ້ ເປັນຕົ້ນ.



ກອງປະຊຸມຄັ້ງທີ 1: ທີ່ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງ ຫຼວງພະບາງ ໃນວັນທີ 26 ກຸມພາ 2018



ກອງປະຊຸມຄັ້ງທີ 2: ທີ່ທະນາຄານແຫ່ງ ສປປ ລາວ ສາຂາພາກໃຕ້ ແຂວງ ຈຳປາສັກ ໃນວັນທີ 2 ມີນາ 2018

# ຂ່າວ ແລະ ພາບໂດຍ: ຄະນະເຮັດວຽກພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ